ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳມະນາ "ນະໂຍບາຍການບໍລິຫານຄວາມສ່ຽງ ສຳລັບ ສກຈຮ ໃນລາວ"



ກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ "ນະໂຍບາຍການບໍລິຫານຄວາມສ່ຽງສຳລັບສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ໃນສປປ ລາວ" ໄດ້ຮັບຜົນສຳເລັດໃນວັນທີ 16 ມັງກອນ 2020 ຊຶ່ງດຳເນີນມາເປັນເວລາ 1 ວັນ ທີ່ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ໝູໄຊ ພູມສຸວັນ ຮອງຫົວໜ້າກົມບໍລິການທະນາຄານທະນາຄານແຫ່ງສປປ ລາວ (ທຫລ) ແລະ ທ່ານ ອິນດຣາຈິດ ວິເຈສິຣິວັດທະນາ ຫົວໜ້າທີມງານທີ່ປຶກສາໂຄງການກອງທຶນ LAFF ຂອງບໍລິສັດ AFC; ຜູ້ຕາງໜ້າຈາກອົງການ KfW, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນຂອງ ທຫລ, ສະມາຄົມການເງິນຈຸລະພາກ ແລະ ຜູ້ຕາງໜ້າຈາກບັນດາ ສກຈຮ ໃນທົ່ວປະເທດ ເຂົ້າຮ່ວມ.

ໃນການສຳມະນາໄດ້ມີການແລກປ່ຽນກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນຂອງການບໍລິຫານຄວາມສ່ຽງຕ່າງໆທີ່ມີໃນ ສກຈຮ ແລະ ວິທີການໃນການກຳຈັດ ຫຼື ຮັບມືກັບຄວາມສ່ຽງເຮັດໃຫ້ຄວາມສ່ຽງຢູ່ໃນລະດັບທີ່ສາມາດຄວບຄຸມໄດ້; ແລກປ່ຽນບົດຮຽນ ແລະ ປະສົບການກ່ຽວກັບການພັດທະນານະໂຍບາຍການບໍລິຫານຄວາມສ່ຽງຂອງ ສກຈຮ ປະຕູຄຳ ທີ່ຮັບການຊ່ວຍເຫຼືອດ້ານວິຊາການຈາກທາງໂຄງການກໍ່ຄືທີມງານທີ່ປຶກສາຂອງບໍລິສັດ AFC ທີ່ສະເໜີປະສົບການຕົວຈິງຕໍ່ນະໂຍບາຍການບໍລິຫານຄວາມສ່ຽງລວມທັງພາລະບົດບາດຂອງສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ທີມງານບໍລິຫານກ່ຽວກັບການບໍລິຫານຄວາມສ່ຽງ.

ພ້ອມນີ້, ທີ່ປະຊຸມຍັງຈັດເວທີສົນທະນາຫົວຂໍ້ "ການຄຸ້ມຄອງ ແລະ ການບໍລິຫານຄວາມສ່ຽງ" ໂດຍມີຜູ້ຕາງໜ້າຈາກກົມຄຸ້ມຄອງສະຖາບັນການເງິນ ທຫລ - ສະມາຄົມການເງິນຈຸລະພາກ ທີ່ໃຫ້ຄວາມກະຈ່າງແຈ້ງກ່ຽວກັບຄວາມຄາດຫວັງຂອງ ທຫລ ກໍ່ຄືຜູ້ຄຸ້ມຄອງດ້ານລະບຽບການເພື່ອໃຫ້ ສກຈຮ ໃນສປປ ລາວ ໄດ້ປະຕິບັດ ແລະ ຮັບປະກັນໃຫ້ໄດ້ມີນະໂຍບາຍການບໍລິຫານຄວາມສ່ຽງ ແລະ ຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວເຂົ້າໃນການດຳເນີນງານປະຈຳວັນ ແລະ ຫົວຂໍ້ "ສກຈຮ ກັບນະໂຍບາຍການບໍລິຫານຄວາມສ່ຽງລວມທັງຄວາມຕ້ອງການກ່ຽວກັບການຝຶກອົບຮົມ" ໂດຍມີຜູ້ຕາງໜ້າຈາກ ສກຈຮ ປະກອບຄຳເຫັນກ່ຽວກັບບັນຫາການເຄື່ອນໄຫວຕົວຈິງ ແລະ ການຊ່ວຍເຫຼືອດ້ານວິຊາການເພື່ອເຮັດໃຫ້ ສກຈຮ ມີນະໂຍບາຍການບໍລິຫານຄວາມສ່ຽງຢ່າງເຕັມຮູບແບບ ແລະ ຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວຢ່າງມີປະສິດທິຜົນ, ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ມີຄວາມຍືນຍົງ.

ໂຄງການກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນໃນ ສປປ ລາວ (ກອງທຶນ LAFF) ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານຂອງປະເທດເຢຍລະມັນຕາງໜ້າໂດຍທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ (KfW) ມອບໃຫ້ແກ່ລັດຖະບານສປປ ລາວ ແລະ ທຫລ ເປັນຜູ້ຄຸ້ມຄອງບໍລິຫານໂຄງການຊຶ່ງໄດ້ເລີ່ມຕົ້ນແຕ່ປີ 2014 ເປັນຕົ້ນມາໂດຍໄດ້ປ່ອຍເງິນກູ້ແບບມອບເໝົາງວດທໍາອິດໃຫ້ແກ່ທະນາຄານເອຊີລີດາລາວຈໍາກັດໃນປີ 2015; ມາຮອດປີ 2018, ໂຄງການດັ່ງກ່າວໄດ້ຂະຫຍາຍການບໍລິການທຶນເງິນກູ້ແບບມອບເໝົາຂອງຕົນໃຫ້ແກ່ ສກຈຮ ປະຕູຄໍາທີ່ເປັນສະຖາບັນການເງິນຈຸລະພາກແຫ່ງທໍາອິດທີ່ເປັນຄູ່ຮ່ວມງານຂອງໂຄງການ ແລະ ໄດ້ປ່ອຍເງິນກູ້ແບບມອບເໝົາໃຫ້ແກ່ ສກຈຮ ດັ່ງກ່າວໃນກາງປີ 2019 ເພື່ອນໍາເອົາໄປປ່ອຍກູ້ຕໍ່ໃຫ້ແກ່ຫົວໜ່ວຍຈຸລະວິສາຫະກິດ (MSMEs) ເພື່ອສົ່ງເສີມການເຂົ້າເຖິງແຫຼ່ງທຶນສໍາລັບ MSMEs ໃນສປປ ລາວ ຢ່າງມີປະສິດທິຜົນ ແລະ ຍືນຍົງ.

ໃນໂອກາດນີ້; ທ່ານຮອງຫົວໜ້າກົມບໍລິການທະນາຄານ ທຫລ ຕາງໜ້າຄະນະຊີ້ນໍາ ແລະ ຄະນະຄຸ້ມຄອງບໍລິຫານກອງທຶນ LAFF ຂໍສະແດງຄວາມຂອບໃຈຢ່າງລົ້ນເຫຼືອມາຍັງລັດຖະບານຂອງປະເທດເຢຍລະມັນກໍ່ຄືທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ (KfW) ທີ່ໄດ້ໃຫ້ທຶນສະໜັບສະໜູນໂຄງການດັ່ງກ່າວດ້ວຍດີສະເໝີມາຊຶ່ງໄດ້ເປັນການປະກອບສ່ວນເຮັດໃຫ້ຂະແໜງການສະຖາບັນການເງິນຈຸລະພາກມີຄວາມເຂັ້ມແຂງເທື່ອລະກ້າວເຮັດໃຫ້ປະຊາຊົນໂດຍສະເພາະຜູ້ປະກອບການໃນຫົວໜ່ວຍຈຸລະວິສາຫະກິດຈໍານວນຫຼາຍສົມຄວນຮັບຮູ້, ເຂົ້າໃຈວຽກງານດັ່ງກ່າວ ແລະ ສາມາດເຂົ້າເຖິງ-ນໍາໃຊ້ແຫຼ່ງທຶນເຂົ້າໃນການຜະລິດ-ທຸລະກິດຢ່າງມີຜົນດີ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ